**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານຟາມລ້ຽງງົວຊີ້ນ ຂອງ ສປປ ລາວ

| | | |
|---|---|---|
| ລະຫັດມາດຕະຖານ | : | ມກປ-ລປ-2018-00003 |
| **STDCODE** | **:** | **AFSTD-LF-2018-00003** |

**ວຽງຈັນ, 2018**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານຟາມລ້ຽງງົວຊີ້ນ ຂອງ ສປປ ລາວ

**ລະຫັດມາດຕະຖານ : ມກປ.ລປ.2018.00003**
**STDCODE : AFSTD-LF-2018-00003**


<u>ອົງການສ້າງມາດຕະຖານ:</u>
ກົມລ້ຽງສັດ ແລະ ການປະມົງ
ຖະໜົນ ສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ.
ນະຄອນຫຼວງວຽງຈັນ, ສປປ ລາວ, ຕປນ. 6644
ເບີ້ໂທລະສັບ: +856 21 215242-3
ເບີ້ໂທລະສານ:+856 21 215141
ເວບໄຊທ: http://dlf.maf.gov.la


ວຽງຈັນ, 2018

## ສາລະບານ


| | | ໜ້າ |
|---|---|---|
| | ຄຳນຳ | 1 |
| 1 | ຈຸດປະສົງ | 2 |
| 2 | ຂອບເຂດການນຳໃຊ້ | 2 |
| 3 | ການອະທິບາຍຄຳສັບ | 2 |
| 4 | ມາດຕະຖານດ້ານທີ່ຕັ້ງ | 2 |
| 5 | ມາດຕະຖານດ້ານພື້ນທີ່ ແລະ ການຈັດວາງຜັງຂອງຟາມ | 3 |
| 6 | ມາດຕະຖານດ້ານໂຮງເຮືອນ | 3 |
| 7 | ມາດຕະຖານດ້ານອາຫານງົວຊີ້ນ | 4 |
| 8 | ມາດຕະຖານນ້ຳສຳລັບລ້ຽງງົວຊີ້ນ | 4 |
| 9 | ມາດຕະຖານດ້ານການບໍລິຫານຄຸ້ມຄອງຟາມ | 4 |
| 10 | ມາດຕະຖານການຈັດການດ້ານບຸກຄະລາກອນ | 4 |
| 11 | ມາດຕະຖານດ້ານຄວາມສະອາດ ແລະ ຄວາມປອດໄພ | 4 |
| 12 | ການຈັດການດ້ານສຸຂະພາບສັດ | 5 |
| 13 | ມາດຕະຖານດ້ານສິ່ງແວດລ້ອມຂອງຟາມງົວຊີ້ນ | 5 |
| 14 | ການຈັດການດ້ານສະຫວັດດີການສັດ | 5 |
| 15 | ການຂົນສົ່ງ | 5 |
| 16 | ສາງເກັບຮັກສາ | 6 |
| 17 | ການບັນທຶກຂໍ້ມູນ | 6 |

# ຄໍານໍາ

ມາດຕະຖານຟາມລ້ຽງງົວຊີ້ນສະບັບນີ້ສ້າງຂຶ້ນ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະ ແພດ, ນະໂຍບາຍແຫ່ງຊາດວ່າດ້ວຍຄວາມປອດໄພຂອງອາຫານ ໂດຍມີຈຸດປະສົງໃຫ້ເປັນຄູ່ມືປະຕິບັດໃຫ້ແກ່ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃນການຄວບຄຸມ ການລ້ຽງງົວຊີ້ນ ຢູ່ໃນ ສປປ ລາວ ໃຫ້ມີຄຸນ ນະພາບ, ປອດໄພ, ເປັນມິດກັບສິ່ງແວດລ້ອມ ປະກອບສ່ວນໃນການສົ່ງເສີມຍົກລະດັບ ສິນຄ້າ ຂອງ ສປປ ລາວ ໃຫ້ ສາມາດແຂ່ງຂັນທາງດ້ານການຄ້າ ກັບ ພາກພື້ນ, ອະນຸພາກພື້ນ ແລະ ສາກົນ ໃຫ້ນັບມື້ນັບສູງຂຶ້ນ.

ເອກະສານນີ້ ໄດ້ກວມເອົາ ບັນດາຂໍ້ກໍານົດທີ່ເປັນມາດຕະຖານ ສໍາລັບການປະຕິບັດງານຟາມລ້ຽງງົວຊີ້ນທີ່ດີ ເປັນຕົ້ນ ສະຖານທີ່ຕັ້ງຟາມ, ອົງປະກອບຂອງຟາມ, ພື້ນທີ່ ແລະ ການຈັດວາງຜັງຂອງຟາມ, ອາຄານຄອກສັດ ແລະ ໂຮງ ເຮືອນການຈັດ ການດ້ານອາຫານ ແລະ ນໍ້າ, ການຄຸ້ມຄອງ ບໍລິຫານຟາມ, ດ້ານສຸຂານາໄມໃນຟາມ, ການຈັດການ ຂອງເສັຍ ແລະ ສິ່ງແວດລ້ອມ, ການຈັດການດ້ານສຸຂະພາບສັດ, ການຈັດການດ້ານສະຫວັດດີການສັດ, ການຂົນສົ່ງ, ສາງ ເກັບຮັກສາ ແລະ ການບັນທຶກຂໍ້ມູນ.

ກົມລ້ຽງສັດ ແລະ ການປະມົງ ຂໍແຈ້ງວ່າ ມາດຕະຖານເຕັກນິກສະບັບນີ້ ແມ່ນສ້າງຂຶ້ນບົນພື້ນຖານທີ່ໄດ້ຜ່ານ ການປຶກສາຫາລືຢ່າງກວ້າງຂວາງຈາກຜູ້ຊ່ຽວຊານທັງພາຍໃນ ແລະ ພາຍນອກກົມແລ້ວ ແລະ ຫວັງວ່າຈະໃຫ້ກາຍເປັນ ມາດຕະຖານເຕັກນິກສໍາລັບຟາມລ້ຽງງົວຊີ້ນຂອງ ສປປ ລາວ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ມາດຕະຖານສະບັບນີ້ປ່ຽນແທນມາດຕະຖານເລກທີ 0027/ກລປ. ລົງວັນທີ 19 ມີນາ 2013.

ອອກທີ່: ນະຄອນຫຼວງວຽງຈັນ, ວັນທີ່:..17....JUL 2018

ອອກໂດຍ: ຫົວໜ້າກົມລ້ຽງສັດ ແລະ ການປະມົງ

ສົມພັນ ຈັນເພັງໄຊ

## 1. ຈຸດປະສົງ

ມາດຕະຖານດ້ານເຕັກນິກຟາມລ້ຽງງົວຊີ້ນ ຂອງ ສປປ ລາວ ສະບັບນີ້ມີຈຸດ ປະສົງ ດັ່ງນີ້:

1) ເພື່ອຍົກສູງປະລິມານ ຄຸນນະພາບຂອງຜະລິດຕະພັນຊີ້ນງົວໃຫ້ມີຄວາມປອດໄພຕໍ່ຜູ້ບໍລິໂພກ ແລະ ສ້າງເງື່ອນໄຂໃຫ້ຜະລິດຕະພັນງົວ ຂອງ ສປປ ລາວ ສາມາດ ສົ່ງອອກສູ່ຕະຫຼາດສາກົນ;

2) ເພື່ອຍົກສູງມາດຕະການປ້ອງກັນພະຍາດສັດໃຫ້ແກ່ ຜູ້ລ້ຽງງົວ ບໍ່ໃຫ້ໄດ້ຮັບເຊື້ອພະຍາດ ໂດຍສະເພາະ ແມ່ນພະຍາດສັດຕິດຕໍ່ຈາກສັດສູ່ຄົນ ແລະ ປ້ອງກັນບໍ່ໃຫ້ພະຍາດຂອງຄົນ ປົນເປື້ອນກັບຜະລິດຕະພັນງົວ;

3) ເພື່ອຍົກສູງ ສະຕິ ໃນການປະຕິບັດຫຼັກການສະຫວັດດີການສັດ ແລະ ການປົກປັກຮັກສາສະພາບແວດລ້ອມຂອງຟາມລ້ຽງສັດ ໃຫ້ສູງຂຶ້ນ;

4) ເພື່ອສ້າງໃຫ້ມີມາດຕະຖານການລ້ຽງງົວຊີ້ນ ທີ່ເປັນເອກະພາບ ແນໃສ່ຍົກສູງ ວຽກງານກວດກາ ແລະ ຢັ້ງຢືນມາດຕະຖານຟາມລ້ຽງສັດ ໃຫ້ເປັນສາກົນເທື່ອລະກ້າວ ແນໃສ່ ຍົກລະດັບການປະຕິບັດບັນດາສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີໃຫ້ສູງຂຶ້ນ.

## 2. ຂອບເຂດການນໍາໃຊ້

ມາດຕະຖານເຕັກນິກນີ້ ນໍາໃຊ້ສໍາລັບຟາມລ້ຽງງົວຊີ້ນ ພໍ່-ແມ່ພັນ, ຟາມລ້ຽງງົວ ເພື່ອປັບສະພາບກ່ອນທອມ ຫຼື ຈໍາໜ່າຍ ແລະ ຟາມລ້ຽງງົວເພື່ອປັບສະພາບກ່ອນທອມ ຫຼື ກ່ອນຈໍາໜ່າຍ.

## 3. ການອະທິບາຍຄໍາສັບ

ຄໍາສັບທີ່ໃຊ້ໃນມາດຕະຖານເຕັກນິກນີ້ມີຄວາມໝາຍດັ່ງນີ້:

1) ງົວຊີ້ນ ໝາຍເຖິງ ສັດທີ່ຈັດຢູ່ໃນຕະກຸນ Bos indicus ແລະ Bos taurus ອິງ Bovidea ທີ່ຄົນເຮົານໍາມາລ້ຽງເພື່ອເອົາຊີ້ນ ຫຼື ຜະລິດຕະຜົນອື່ນໆ ເພື່ອການບໍລິໂພກ;

2) ຟາມງົວຊີ້ນ ໝາຍເຖິງ ສະຖານທີ່ປະກອບການລ້ຽງງົວຊີ້ນເພື່ອເປັນສິນຄ້າ ຊຶ່ງລວມເອົາ ຟາມລ້ຽງງົວຊີ້ນ ພໍ່-ແມ່ພັນ, ຟາມລ້ຽງງົວເພື່ອປັບສະພາບກ່ອນທອມ ຫຼື ຈໍາໜ່າຍ ແລະ ຟາມລ້ຽງງົວທອມ;

3) ຟາມລ້ຽງງົວຊີ້ນພໍ່-ແມ່ພັນ ໝາຍເຖິງ ຟາມງົວທີ່ລ້ຽງ ພໍ່ພັນ, ແມ່ພັນ ງົວພັນຊີ້ນ ເພື່ອການປະສົມພັນຜະລິດລູກງົວຊີ້ນສາຍເລືອດພັນບໍລິສຸດ ຫຼື ພັນປະສົມ ສໍາລັບຈໍາໜ່າຍ;

4) ຟາມລ້ຽງງົວເພື່ອປັບສະພາບກ່ອນທອມ ຫຼື ຈໍາໜ່າຍ ໝາຍເຖິງ ຟາມລ້ຽງງົວຊີ້ນ ທີ່ຢູ່ໃນໄລຍະບໍ່ທັນພ້ອມທີ່ຈະທອມ ໂດຍຕ້ອງໄດ້ລ້ຽງງົວນັ້ນໄວ້ ເພື່ອປັບສະພາບທາງຮ່າງກາຍກ່ອນການນໍາໄປທອມ;

5) ຟາມລ້ຽງງົວທອມ ໝາຍເຖິງ ຟາມລ້ຽງງົວຊີ້ນ ເພື່ອເລັ່ງການຈະເລີນເຕີບໂຕ ດ້ວຍການໃຫ້ອາຫານທີ່ມີຄຸນນະພາບໃນຊ່ວງໄລຍະເວລາໜຶ່ງ ເພື່ອຈຸດປະສົງໃຫ້ໄດ້ຊີ້ນທີ່ມີຄຸນນະພາບດີ;

6) ງົວພັນແທ້ ໝາຍເຖິງ ງົວທີ່ໄດ້ຮັບການປະສົມພັນ ແລະ ມີລະດັບສາຍເລືອດເດີມສູງກວ່າ 96%;

7) ງົວພັນລູກປະສົມ ໝາຍເຖິງ ງົວທີ່ໄດ້ຈາກການປະສົມພັນ ທີ່ມີສອງສາຍ ເລືອດຂຶ້ນໄປ;

8) ອາຫານສັດ ໝາຍເຖິງອາຫານທີ່ໄດ້ຈາກວັດຖຸດິບຊະນິດດຽວ ຫຼື ຫຼາຍຊະນິດໃນສະພາບຍັງສົດ ຫຼື ໄດ້ຜ່ານຂະບວນການປຸງແຕ່ງເປັນຜະລິດຕະພັນເຄິ່ງສໍາເລັດຮູບ ຫຼື ສໍາເລັດຮູບແລ້ວ ໂດຍມີຈຸດປະສົງນໍາໃຊ້ລ້ຽງສັດໃຫ້ມີການຈະເລີນເຕີບໂຕ;

9) ໂຮງເຮືອນ ໝາຍເຖິງສິ່ງປຸກສ້າງທີ່ມີຫຼັງຄາ, ມີໂຄງສ້າງແຂງແຮງ, ປະກອບດ້ວຍລະບົບນໍ້າ ແລະ ອາຫານສັດ. ພາຍໃນໂຮງເຮືອນ ອາດແບ່ງອອກເປັນຄອກ ຫຼື ເປັນລັອກ ຕາມຈຸດປະສົງທີ່ຕ້ອງການ.

## 4. ມາດຕະຖານດ້ານທີ່ຕັ້ງ

4.1. ຕ້ອງແມ່ນສະຖານທີ່ງ ໄດ້ຮັບການເຫັນດີຈາກອົງການປົກຄອງທ້ອງຖິ່ນ, ຫ່າງໄກຈາກຊຸມຊົນ ແລະ ບໍ່ເປັນການລົບກວນຕໍ່ສັງຄົມອ້ອມຂ້າງ;

4.2. ເປັນສະຖານທີ່ໆ ມີສະພາບແວດລ້ອມ ທີ່ບໍ່ສ່ຽງຕໍ່ການປົນເປື້ອນ ຈາກອັນຕະລາຍຈາກເຄມີ ແລະ ຊີວະພາບ;

4.3. ເປັນບ່ອນທີ່ມີແຫຼ່ງນໍ້າທີ່ສະອາດ ພຽງພໍກັບຄວາມຕ້ອງການ;

4.4. ເປັນສະຖານທີ່ ທີ່ເໝາະສົມສໍາລັບລ້ຽງງົວຊີ້ນ ແລະ ບໍ່ມີນໍ້າຖ້ວມຂັງ;

4.5. ຖ້າມີໂຮງຂ້າສັດຢູ່ກັບຟາມ ຄວນຕັ້ງໃຫ້ຫ່າງຈາກຄອກສັດປະມານ 100 ແມັດ.

5. ມາດຕະຖານດ້ານພື້ນທີ່ ແລະ ການຈັດວາງຜັງຂອງຟາມ

5.1. ຕ້ອງວາງຜັງຟາມ ແລະ ຈັດພື້ນທີ່ເປັນສັດສ່ວນຢ່າງຊັດເຈນຕາມຄວາມເໝາະສົມ ແລະ ຖືກຕາມ ຈຸດປະສົງຂອງການລ້ຽງເຊັ່ນ: ຄວນມີ ທົ່ງຫຍ້າ, ໂຮງເຮືອນ ທີ່ມີຄອກຢູ່ພາຍໃນ ຕາມຄວາມເໝາະສົມ, ມີສາງເກັບຮັກສາອາຫານສັດ ແລະ ອຸປະກອນແຍກຢູ່ຕ່າງຫາກ, ມີສິ່ງອໍານວຍຄວາມສະດວກ ແລະ ມີລະບົບຈັດການກັບຂອງເສຍ ຕ່າງໆຢ່າງພຽງພໍ;

5.2. ພື້ນທີ່ພາຍໃນໂຮງເຮືອນ ຕ້ອງມີຄອກຢ່າງພຽງພໍ ແລະ ຕ້ອງມີຫຼັງຄາ ກັນແສງແດດ ແລະ ຝົນທີ່ຮັບປະກັນ;

5.3. ມີຮົ້ວກັ້ນອ້ອມຮອບ ທີ່ສາມາດຄວບຄຸມການເຂົ້າອອກ ຂອງຄົນ ແລະ ສັດຈາກພາຍນອກ;

5.4. ພື້ນທີ່ ລ້ຽງສັດ ຕ້ອງແຍກຈາກ ພື້ນທີ່ໆເປັນທີ່ພັກອາໄສ.

6. ມາດຕະຖານດ້ານໂຮງເຮືອນ

6.1. ໂຮງເຮືອນຕ້ອງເໝາະສົມກັບການລ້ຽງງົວ ແຕ່ລະປະເພດ ໂດຍມີການແບ່ງພື້ນທີ່ ຫຼື ບໍລິເວນເພື່ອ ສະດວກໃນການຈັດການລ້ຽງງົວແຕ່ລະຊ່ວງອາຍຸ ຫຼື ຂະໜາດຂອງງົວ;

6.2. ໂຄງສ້າງໂຮງເຮືອນຕ້ອງເຮັດດ້ວຍວັດຖຸທີ່ຄົງທົນ ຖາວອນງ່າຍຕໍ່ການທໍາຄວາມສະອາດ ແລະ ບໍາລຸງຮັກສາ, ມີການລະບາຍອາກາດທີ່ດີ ແລະ ບໍ່ກໍ່ໃຫ້ເກີດອັນຕະລາຍຕໍ່ງົວ ແລະ ຜູ້ລ້ຽງ;

6.3. ພື້ນໂຮງເຮືອນຄວນເປັນພື້ນລຽບ ແຕ່ບໍ່ມື່ນ ສາມາດທໍາຄວາມສະອາດ ແລະ ຈັດການໄດ້ໂດຍສະດວກ, ມີລະບົບລະບາຍນໍ້າທີ່ດີ ບໍ່ເປັນບ່ອນສະສົມຂອງຂີ້ສັດ ຫຼື ສິ່ງເສດເຫຼືອ ທີ່ເກີດຂຶ້ນຢູ່ພາຍໃນໂຮງເຮືອນ;

6.4. ຕ້ອງມີຫຼັງຄາທີ່ມີຄວາມສູງຢ່າງເໝາະສົມ ເພື່ອໃຫ້ເປັນບ່ອນໃຫ້ງົວມາພັກຜ່ອນ ຫຼື ຊື້ນຮົ່ມ;

6.5. ມີຊ່ອງທາງສໍາລັບໄລ່ຕ້ອນສັດ ແລະ ມີບ່ອນໃຫ້ສັດຂຶ້ນລົງພາຫານະຢ່າງເໝາະສົມ ແລະ ປອດໄພ;

6.6. ມີຄອກແຄບເພື່ອສະດວກໃນການສັກຢາກັນພະຍາດ, ໃຫ້ຢາຂ້າແມ່ທ້ອງ ຫຼື ປະສົມພັນທຽມ;

6.7. ສໍາລັບຄອກງົວແມ່ພັນທ້ອງຫວ່າງ ອາດເຮັດເປັນຄອກແບບລ້ຽງລວມ ຫຼື ຄອກດ່ຽວ, ຄວນມີຄອກ ຫຼື ພື້ນທີ່ສໍາລັບແມ່ງົວຖືພາມານ ແລະ ຕ້ອງມີຄອກ ຫຼື ແຍກຕາງຫາກສໍາລັບແມ່ງົວທີ່ກໍາລັງລ້ຽງລູກ;

6.8. ຄອກພໍ່ພັນຄວນເຮັດເປັນຄອກດ່ຽວ ທີ່ມີພື້ນທີ່ເໝາະສົມ;

6.9. ໂຮງເຮືອນສໍາລັບຟາມງົວຊີ້ນ ເພື່ອປັບສະພາບ ອາດເປັນຄອກລວມ ຫຼື ຄອກດ່ຽວ ທີ່ມີພື້ນທີ່ພຽງພໍ ໂດຍບໍ່ໃຫ້ແອອັດ;

6.10. ໂຮງເຮືອນສໍາລັບຟາມລ້ຽງງົວຫອມ ອາດສ້າງເປັນຄອກດ່ຽວ ຫຼື ຄອກລວມ ແຕ່ຕ້ອງມີການແບ່ງເປັນສັດສ່ວນ ໃຫ້ເໝາະສົມກັບ ລຸ້ນ, ຂະໜາດ ແລະ ຈໍານວນງົວທີ່ລ້ຽງ;

6.11. ພື້ນຄອກໃນບໍລິເວນທີ່ງົວກິນອາຫານຕ້ອງເປັນພື້ນຊີມັງ, ລຽບ ແຕ່ບໍ່ໃຫ້ມື່ນ ຫຼື ອາດເປັນພື້ນດິນອັດແໜ້ນ ທີ່ມີພື້ນທີ່ພຽງພໍ, ສະອາດ ແລະ ບໍ່ໃຫ້ປຽກຊຸ່ມ;

6.12. ຮາງອາຫານສໍາລັບຟາມງົວຊີ້ນ ຕ້ອງເຮັດດ້ວຍວັດຖຸທີ່ສາມາດທໍາຄວາມສະອາດໄດ້ງ່າຍ ບໍ່ກໍ່ໃຫ້ສັດເກີດອັນຕະລາຍ ແລະ ຕ້ອງມີພຽງພໍກັບຂະໜາດ ແລະ ຈໍານວນງົວຊີ້ນ;

6.13. ອ່າງນໍ້າ ຕ້ອງເຮັດດ້ວຍວັດຖຸທີ່ທໍາຄວາມສະອາດໄດ້ງ່າຍ ແລະ ໃຫ້ຈັດວາງໄວ້ໃນຕໍາແໜ່ງທີ່ເໝາະສົມເພື່ອໃຫ້ງົວຊີ້ນໄດ້ກິນນໍ້າຢ່າງສະດວກ, ພຽງພໍ ແລະ ທົ່ວເຖິງ;

6.14. ຮົ້ວກັນຮອບນອກຄວນ ມີ 4 ຮາວ, ຄວາມສູງ ຢ່າງໜ້ອຍ 150 ຊຕມ. ສ່ວນ ຮົ້ວກັ້ນພາຍໃນຄວນມີຮາວຢ່າງໜ້ອຍ 3 ຮາວ.

7. ມາດຕະຖານດ້ານອາຫານງົວຊີ້ນ

7.1. ຕ້ອງຈັດໃຫ້ມີອາຫານຫຍາບ ແລະ ອາຫານຂຸ້ນທີ່ມີຄຸນນະພາບດີ ພຽງພໍກັບຄວາມຕ້ອງການຂອງງົວຊີ້ນ, ປະເພດອາຫານຂຸ້ນຕ້ອງມີຄຸນນະພາບດີ ແລະ ມາຈາກແຫຼ່ງຜະລິດທີ່ໄດ້ຮັບອະນຸຍາດຕາມລະບຽບການກຳນົດ;

7.2. ກໍລະນີນາໃຊ້ອາຫານສັດປະສົມເອງ ຕ້ອງຄານຶງເຖິງຄຸນນະພາບອາຫານສັດຕາມຊ່ວງອາຍຸຂອງງົວຊີ້ນ ແລະ ຕ້ອງບໍ່ປະສົມສານຕ້ອງຫ້າມ ຕາມທີ່ລະບຽບການກຳນົດ;

7.3. ການຂົນສົ່ງອາຫານສັດ ຕ້ອງຮັບປະກັນ ບໍ່ໃຫ້ຖືກຝົນ ຫຼື ປຽກຊຸ່ມ ຫຼື ເຮັດໃຫ້ອາຫານງົວເກີດການເສື່ອມຄຸນນະພາບ;

7.4. ຕ້ອງມີສາງເກັບຮັກສາອາຫານງົວແຍກເປັນສັດສ່ວນ ແລະ ຕ້ອງເກັບໄວ້ໃນສະພາບທີ່ປ້ອງກັນການປົນເປື້ອນ ແລະ ການເສື່ອມຄຸນນະພາບ;

7.5. ຕ້ອງມີການບັນທຶກໃນການນຳໃຊ້ອາຫານ ແລະ ກວດກາຄຸນນະພາບອາຫານສັດ;

7.6. ເຂົ້າເຖິງລະບົບຕິດຕາມ ການວິໄຈຄຸນນະພາບຂອງອາຫານງົວຂອງຫ້ອງວິໄຈອາຫານສັດທີ່ລັດຮັບຮອງ.

8. ມາດຕະຖານນໍ້າສຳລັບລ້ຽງງົວຊີ້ນ

8.1. ແຫຼ່ງນໍ້າທີ່ນຳມາໃຊ້ໃນຟາມລ້ຽງງົວ ຕ້ອງມາຈາກແຫຼ່ງທີ່ບໍ່ມີຄວາມສ່ຽງປົນເປື້ອນຈາກສິ່ງທີ່ເປັນອັນຕະລາຍ;

8.2. ນໍ້າທີ່ໃຊ້ໃຫ້ງົວກິນຕ້ອງສະອາດ, ປອດໄພ ແລະ ມີປະລິມານພຽງພໍກັບຄວາມຕ້ອງການຕະຫຼອດເວລາ ແລະ ຮັບປະກັນໃຫ້ງົວໄດ້ກິນຢ່າງທົ່ວເຖິງ.

9. ມາດຕະຖານດ້ານການບໍລິຫານຄຸ້ມຄອງຟາມ

ຕ້ອງມີຄູ່ມືການຈັດການຟາມທີ່ສະແດງລາຍລະອຽດການປະຕິບັດງານ ທີ່ສຳຄັນຂອງຟາມ ເປັນຕົ້ນການຈັດຕັ້ງຄຸ້ມຄອງຟາມ, ການຈັດການລະບົບການລ້ຽງ, ການໃຫ້ນໍ້າ ແລະ ອາຫານ, ການໃຫ້ຢາ, ການຈັດການດ້ານສຸຂະພາບສັດ, ສະຫວັດດີການສັດ, ສິ່ງແວດລ້ອມ ແລະ ການບັນທຶກຂໍ້ມູນຕ່າງໆ.

10. ມາດຕະຖານການຈັດການດ້ານບຸກຄະລາກອນຂອງຟາມ

10.1 ຕ້ອງມີຈຳນວນບຸກຄະລາກອນເໝາະສົມກັບຈຳນວນງົວຊີ້ນທີ່ລ້ຽງໂດຍມີການຈັດແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບຢ່າງຊັດເຈນ;

10.2 ບຸກຄະລາກອນຕ້ອງມີຄວາມຮູ້ ແລະ ໄດ້ຮັບການຝຶກອົບຮົມ ກ່ຽວກັບການລ້ຽງງົວ ຫຼື ການປະຕິບັດງານທີ່ດີຢູ່ພາຍໃນຟາມ;

10.3 ຄວນມີສັດຕະວະແພດຄຸມຟາມ ທີ່ມີໃບຢັ້ງຢືນໃຫ້ຄຸມຟາມ;

10.4 ບຸກຄະລາກອນທີ່ເປັນຜູ້ປະຕິບັດງານໃນຟາມຕ້ອງມີສຸຂະພາບສົມບູນແຂງແຮງ ແລະ ມີການກວດສຸຂະພາບປະຈຳປີ ແລະ ມີໃບຢັ້ງຢືນບໍ່ເປັນພະຍາດຮ້າຍແຮງ ເປັນຕົ້ນ ແມ່ນພະຍາດວັນນະໂຣກ.

11. ມາດຕະຖານດ້ານຄວາມສະອາດ ແລະ ຄວາມປອດໄພ

11.1 ໂຮງເຮືອນ, ຄອກງົວ ແລະ ອຸປະກອນ ຮັບໃຊ້ຕ້ອງສະອາດ ແລະ ໄດ້ຮັບການບຳລຸງຮັກສາໃຫ້ຢູ່ໃນສະພາບດີພ້ອມທີ່ຈະໃຊ້ງານ;

11.2 ຕ້ອງມີການເກັບກວດ, ລວບລວມອາຈົມງົວ, ທຳຄວາມສະອາດ, ຂ້າເຊື້ອຄອກງົວຢ່າງເປັນປົກກະຕິ ແລະ ບໍ່ໃຫ້ມີສິ່ງເສດເຫຼືອເປິເປື້ອນຢູ່ພາຍໃນ ແລະ ຢູ່ອ້ອມຮອບຄອກສັດ.

12. ການຈັດການດ້ານສຸຂະພາບສັດ

12.1 ມີສັດຕະວະແພດ ຫຼື ຜູ້ໄດ້ຮັບການມອບໝາຍ ເປັນຜູ້ດູແລສຸຂະພາບສັດ;

12.2 ຕ້ອງມີຄອກພັກສັດ ສໍາລັບງົວເຂົ້າໃໝ່ ແລະ ດໍາເນີນການກັກກັນ ແລະ ກວດກາສຸຂະພາບໂດຍເຈົ້າໜ້າທີ່ຂອງຂະແໜງການລ້ຽງສັດ ແລະ ການປະມົງ ຫຼື ສັດຕະວະແພດຜູ້ຄຸມຟາມ;

12.3 ມີການຂ້າເຊື້ອຍານພາຫານະ ແລະ ບຸກຄົນກ່ອນ ເຂົ້າ ແລະ ອອກ ຈາກຟາມ;

12.4 ມີການບັນທຶກ ການເຂົ້າ ແລະ ອອກ ຈາກຟາມ;

12.5 ມີການເຝົ້າລະວັງ ພະຍາດ ປາກເປື່ອຍລີ້ນເລັບ, ເຕົ້ານົມເລືອດງົວຄວາຍ, ໄຂ້ບວມ, ໄຂ້ເລືອດດໍາ, ແທ້ງລູກຕິດຕໍ່, ວັນນະໂຣກ ແລະ ພະຍາດລະບາດອື່ນຕາມການກໍານົດຂອງອົງການຄຸ້ມຄອງ;

12.6 ເຂົ້າເຖິງລະບົບວິໄຈພະຍາດສັດຂອງພາກລັດ ແລະ ມີການກວດສອບພະຍາດງົວທີ່ສາຄັນ ໂດຍສະເພາະແມ່ນພະຍາດແທ້ງລູກຕິດຕໍ່ ແລະ ພະຍາດວັນນະໂລກປີລະຄັ້ງ;

12.7 ມີແຜນການສັກຢາກັນພະຍາດ, ຂ້າແມ່ກາຝາກພາຍໃນ ແລະ ພາຍນອກ ຢ່າງເປັນລະບົບ;

12.8 ມີມາດຕະການປ້ອງກັນສັດທີ່ເປັນພາຫະນາເຊື້ອພະຍາດເຂົ້າສູ່ຟາມ;

12.9 ກໍລະນີເກີດ ຫຼື ສົງໄສເກີດພະຍາດລະບາດ ຕ້ອງປະຕິບັດຕາມມາດຕະການ ຕາມທີ່ກົດໝາຍ ແລະ ລະບຽບການກໍານົດ;

12.10 ມີຄອກແຍກ, ກັກຂັງ ງົວເຈັບປ່ວຍເພື່ອປິ່ນປົວ ແລະ ການປິ່ນປົວ ຕ້ອງດໍາເນີນໂດຍສັດຕະວະແພດ ແລະ ຕ້ອງປະຕິບັດຕາມລະບຽບການ ແລະ ຫຼັກການດ້ານວິຊາການຢ່າງເຂັ້ມງວດ;

12.11 ມີການກະກຽມ ແລະ ຢາສັດຕະວະແພດ ແຮໄວ້ໃຫ້ມີພຽງພໍກັບຄວາມຕ້ອງການ, ຢາທີ່ໃຊ້ຕ້ອງເປັນຢາທີ່ໄດ້ຂຶ້ນທະບຽນ ແລະ ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງ ແລະ ຮັບປະກັນ ມີປະສິດທິພາບ ແລະ ປອດໄພ;

12.12 ກໍລະນີມີການປິ່ນປົວ ຕ້ອງດໍາເນີນໂດຍສັດຕະວະແພດ. ໃນການນໍາໃຊ້ຢາສັດຕ້ອງນໍາໃຊ້ຢາສັດ ທີ່ໄດ້ຂຶ້ນທະບຽນ ແລະ ໄດ້ຮັບອະນຸຍາດ, ມີຄຸນນະພາບ,ປອດໄພ ແລະ ມີສະຫຼາກແນະນໍາກໍາກັບ. ຫຼີກເວັ້ນ ການກໍ່ໃຫ້ເກີດການດື້ຢາ ຫຼື ມີສານຢາຕົກຄ້າງໃນຜະລິດຕະພັນງົວກ່ອນການຈໍາໜ່າຍ;

12.13 ຕ້ອງນໍາໃຊ້ ແລະ ກໍາຈັດເຂັມສັກຢາ ຢ່າງຖືກວິທີ.

13. ມາດຕະຖານດ້ານສິ່ງແວດລ້ອມຂອງຟາມງົວຊີ້ນ

13.1 ມີແຜນທໍາລາຍຊາກງົວຕາຍຢ່າງຖືກວິທີ ແລະ ຢູ່ພາຍໃຕ້ການຄວບຄຸມ ຊີ້ນໍາຂອງສັດຕະວະແພດ;

13.2 ມີການບໍາບັດນໍ້າເສັຍຂອງຟາມກ່ອນປ່ອຍລົງສູ່ແຫຼ່ງນໍ້າສາທາລະນະ;

13.3 ມີການຈັດການຂີ້ເຫຍື້ອມູນຝອຍ, ອາຈົມສັດຢ່າງເໝາະສົມ ແລະ ຖືກຫຼັກສຸຂະນາໄມ.

14. ການຈັດການດ້ານສະຫວັດດີການສັດ

14.1 ມີການໃຫ້ອາຫານງົວທີ່ມີຄຸນນະພາບ ແລະ ພຽງພໍ ຕາມມາດຕະຖານຂອງສາຍພັນ;

14.2 ມີລະບົບດູແລ ຕໍ່ສັດທີ່ເຈັບປ່ວຍ, ໄດ້ຮັບບາດເຈັບ ຫຼື ພິການ ຖ້າມີຄວາມຈໍາເປັນຕ້ອງໄດ້ຂ້າສັດ ຕ້ອງດໍາເນີນໂດຍບໍ່ແກ່ຍາວ ແລະ ຂ້າດ້ວຍວິທີທີ່ບໍ່ທໍລະມານ;

14.3 ມີການບັງຄັບສັດ ຕ້ອງເຮັດແບບບໍ່ຮຸນແຮງ ຫຼື ບໍ່ໃຫ້ສັດທໍລະມານເກີນຄວາມຈໍາເປັນ.

15. ການຂົນສົ່ງ

15.1 ການຂົນສົ່ງງົວຈາກຟາມໄປເຖິງຈຸດໝາຍປາຍທາງ ຕ້ອງລະມັດລະວັງ ຫຼື ເຮັດໃຫ້ສັດເກີດຄວາມກົດດັນໜ້ອຍທີ່ສຸດ ແລະ ຕ້ອງດູແລບໍ່ເຮັດໃຫ້ສັດໄດ້ຮັບບາດເຈັບ ຫຼື ຕິດພະຍາດ;

15.2 ພາຫານະຂົນສົ່ງງົວ ຕ້ອງອອກແບບສະເພາະ;

15.3 ກ່ອນ ແລະ ຫຼັງການຂົນສົ່ງ ຕ້ອງ ອະນາໄມ ແລະ ຂ້າເຊື້ອພາຫານະທຸກຄັ້ງ;

15.4 ຕ້ອງຂົນສົ່ງງົວ ໃນຍາມທີ່ມີອາກາດເຢັນ;

15.5 ຖ້າມີການຂົນສົ່ງງົວ ຕ່າງອາຍຸ ຫຼື ຕ່າງຂະໜາດ ຄວນມີການກັ້ນເປັນລອກ ຫຼື ມີກ່ອງບັນຈຸທີ່ເໝາະສົມ;

15.6 ການຂົນສົ່ງແຕ່ລະຄັ້ງ ຕ້ອງ ຜ່ານການກວດກາ, ມີການບັນທຶກປະຫວັດການໃຫ້ອາຫານ, ຢາ ແລະ ມີໃບຢັ້ງຢືນການກວດສຸຂະພາບ ທີ່ອອກໂດຍສັດຕະວະແພດທີ່ໄດ້ຮັບມອບໝາຍ.

## 16. ສາງເກັບຮັກສາ

16.1 ຟາມຕ້ອງມີສາງເກັບຮັກສາ ວັດຖຸປະກອນທີ່ຮັບປະກັນ;

16.2 ສາງເກັບຮັກສາເຄື່ອງຂອງ ແລະ ວັດຖຸ ຕ່າງໆຕ້ອງຮັກສາໃຫ້ມີຄວາມສະອາດຢູ່ສະເໝີ;

16.3 ສາງຕ້ອງມີການລະບາຍອາກາດ;

16.4 ຫຼັງຄາຂອງສາງຕ້ອງບໍ່ຮົ່ວຊຶມ ຫຼື ມີຝົນສາດເຂົ້າໄດ້.

## 17. ການບັນທຶກຂໍ້ມູນ

17.1 ຟາມຕ້ອງມີລະບົບການບັນທຶກຂັ້ນຕອນ ທີ່ສຳຄັນຂອງການຈັດການຟາມເຊັ່ນ: ຂໍ້ມູນກ່ຽວກັບ ການຈັດແບ່ງຕຳແໜ່ງງານ, ຈຳນວນແຮງງານ, ການແບ່ງໜ້າທີ່ຄວາມຮັບຜິດຊອບ, ຂໍ້ມູນດ້ານສຸຂະພາບ, ປະຫວັດ ແລະ ການຝຶກອົບຮົມຂອງພະນັກງານໃນຟາມ;

17.2 ຟາມຕ້ອງມີລະບົບການເຮັດທະບຽນພິມສັດ ຫຼື ເລກລະຫັດ ພໍ່-ແມ່ ພັນສັດ, ງົວແຕ່ລະໂຕ, ຫຼື ກຸ່ມ ຫຼື ແຕ່ລະລຸ້ນ ດ້ວຍວິທີການຕ່າງໆບໍ່ໃຫ້ຊໍ້າກັນເຊັ່ນ: ການເຮັດກາໝາຍໃສ່ໂຕສັດ, ໝົບເບີຫູ, ກາໝາຍເອເລັກໂຕຣນິກ ທີ່ມີຂໍ້ມູນສະເພາະ ເປັນຕົ້ນ ພັນ, ເພດ, ອາຍຸ ຫຼື ຂໍ້ມູນອື່ນໆ ເຊັ່ນ:

- ປະຫວັດພໍ່-ແມ່ພັນ;
- ມື້ນຳສັດເຂົ້າ ແລະ ມື້ນຳສັດອອກ;
- ຈຳນວນ;
- ສະມັດຕະພາບການຜະລິດ;
- ການຕິດເຊື້ອ, ການຕາຍ ສາເຫດ ແລະ ອື່ນໆ;
- ການນຳໃຊ້ອາຫານ;
- ປະຫວັດການສັກຢາກັນພະຍາດ ແລະ ການປິ່ນປົວ;
- ຜົນການກວດວິໃຈພະຍາດທາງຫ້ອງວິໄຈ;
- ຟາມທີ່ເປັນທີ່ມາຂອງງົວກ່ອນນຳມາຫອມ;
- ບ່ອນສຸດທ້າຍທີ່ຫອມ ແລະ ນຳງົວອອກ;
- ການບັນທຶກດ້ານສິ່ງແວດລ້ອມ.

ການບັນທຶກເຫຼົ່ານີ້ຈະຕ້ອງເກັບຮັກສາໄວ້ຢ່າງໜ້ອຍ 3 ປີ ຫຼັງຈາກທີ່ນຳສັດອອກຈຳໜ່າຍແລ້ວ.

----------------------------------------ກລປ----------------------------------------